ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 4430/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 14 OCT 2025

ໜັງສືລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫລາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ບັນດາທ່ານຜູ້ຖືຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ຄວາມຄືບໜ້າແຜນປັບປຸງທຸລະກິດ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

- ອີງຕາມ ເອກະສານລາຍງານການເງິນ ປະຈຳປີ 2024 ທີ່ໄດ້ມີການເປີດເຜີຍ.
- ອີງຕາມ ການແຈ້ງການ ການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫລາດຫລັກຊັບລາວ ເລກທີ 639/ຕລຊລ, ລົງວັນທີ 06/05/2025.
- ອີງຕາມກອງປະຊຸມສະພາບໍລິຫານ ຜ-ຟຟລ ສະໄໝວິສາມັນ ຄັ້ງທີ 3, ວັນທີ 06/06/2025
- ອີງຕາມແຜນປັບປຸງທຸລະກິດຂອງບໍລິສັດ ຜ-ຟຟລ, ເລກທີ 1737/ຜ-ຟຟລ, ລົງວັນທີ 06/06/2025

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດຮຽນລາຍງານມາຍັງທ່ານ ກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດວຽກຕາມແຜນປັບປຸງທຸລະກິດ ຂອງ ຜ-ຟຟລ ທີ່ໄດ້ມີການເປີດເຜີຍໃນວັນທີ 6 ມິຖຸນາ 2025. ຜ່ານການປະຕິບັດວຽກໃນໄລຍະ 3 ເດືອນ ເຫັນວ່າມີຄວາມຄືບໜ້າໃນຫລາຍວຽກງານທີ່ສຳຄັນ ໂດຍສະເພາະແມ່ນແຜນການແກ້ໄຂວຽກໃນໄລຍະສັ້ນ (ພາຍໃນປີ 2025), ເຊິ່ງລາຍລະອຽດກ່ຽວກັບການຈັດຕັ້ງປະຕິບັດແຕ່ລະໜ້າວຽກມີດັ່ງລຸ່ມນີ້:

❖ **<u>ແຜນການໄລຍະສັ້ນ (ພາຍໃນປີ 2025) ສາມາດປະຕິບັດໄດ້ດັ່ງນີ້:</u>**

1. **ສືບຕໍ່ຄົ້ນຄວ້າ ແລະ ບັນລຸຂໍ້ຕົກລົງ ກັບ ລັດວິສາຫະກິດໄຟຟ້າລາວ ແລະ ຂັ້ນລັດຖະບານ ໃນການປັບເພີ່ມລາຄາໄຟຟ້າ ໂດຍໄວທີ່ສຸດ ຕາມເງື່ອນໄຂສັນຍາທີ່ມີລະບຸໄວ້ ເພື່ອຫລຸດຜ່ອນຜົນກະທົບອັດຕາແລກປ່ຽນ ລວມທັງເສີມຂີດຄວາມສາມາດໃນການສ້າງຜົນກຳໄລ.**

➢ ຜ-ຟຟລ ໄດ້ສຳເລັດການເຮັດບົດບັນທຶກການປັບເພີ່ມລາຄາໄຟຟ້າ ເລີ່ມຕົ້ນ **4.7 cent/Kwh** ກັບ ລັດວິສາຫະກິດໄຟຟ້າລາວໃນຄັ້ງວັນທີ 06 ສິງຫາ 2025 ແລະ ສາມາດນຳໃຊ້ລາຄາໄຟຟ້າໃຫມ່ເບື້ອງຕົ້ນນັບແຕ່ **01/07/22025-31/12/2025** ຫລື ຈົນກວ່າ ນິຕິກຳກ່ຽວກັບລາຄາໄຟຟ້າໃໝ່ (ສັນຍາຊື້-ຂາຍໄຟຟ້າ ແລະ/ຫຼື ສັນຍາຊື້-ຂາຍໄຟຟ້າ ສະບັບດັດແກ້/ສະບັບ ເພີ່ມເຕີມ) ສຳເລັດ

2. **ສຶກສາ ແລະ ຄົ້ນຄວ້າ ໃນການໂອນຄືນໂຄງການທີ່ ຜ-ຟຟລ ເປັນເຈົ້າຂອງ 100% (HPPs) ມອບຄືນໃຫ້ ແກ່ ລັດວິສາຫະກິດໄຟຟ້າລາວ ໃນມູນຄ່າທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດສູງສຸດ ແລະ ນຳເງິນທີ່ໄດ້ຮັບຈາກການເຮັດທຸລະກຳດັ່ງກ່າວ ໄປຊຳລະໜີ້ສິນຂອງ ຜ-ຟຟລ ໃຫ້ທັນຕາມກຳນົດເວລາ ແລະ ເຮັດໃຫ້ສະພາບໜີ້ສິນຂອງບໍລິສັດດີຂຶ້ນ.**

➢ ຜ-ຟຟລ ແມ່ນໄດ້ຮັບອະນຸມັດດ້ານຫລັກການຈາກຄະນະສະພາບໍລິຫານ ກ່ຽວກັບການໂອນຄືນໂຄງການທີ່ ຜ-ຟຟລ ເປັນເຈົ້າຂອງ 100% (HPPs) ມອບຄືນໃຫ້ ແກ່ ລັດວິສາຫະກິດໄຟຟ້າລາວ ໃນຄັ້ງວັນທີ 06/06/2025 ເຊິ່ງປັດຈຸບັນ ແມ່ນຢູ່ໃນຂັ້ນຕອນການວ່າຈ້າງທີ່ປຶກສາບັນຊີ ເພື່ອປະເມີນກ່ຽວກັບລາຄາຂອງໂຄງການຄືນໃຫມ່ ແລະ ທີ່ປຶກສາກົດໝາຍເພື່ອຮ່າງນິຕິກຳໃນການໂອນໂຄງການຄືນ.

3. **ສືບຕໍ່ດຳເນີນການຕີມູນຄ່າຊັບສິນຄົງທີ່ຂອງ ຜ-ຟຟລ ຄືນໃຫມ່. ເນື່ອງຈາກຊັບສິນດັ່ງກ່າວແມ່ນຖືກປະເມີນນັບແຕ່ມື້ຮັບໂອນເຂົ້າມາໃນບໍລິສັດ ແລະ ຍັງບໍ່ເຄີຍຖືກປະເມີນຄືນໃຫມ່ ໃຫ້ແທດເໝາະກັບສະພາບເງື່ອນໄຂຂອງຊັບສິນ ແລະ ເສດຖະກິດ-ສັງຄົມ ຕົວຈິງຂອງ ສປປ ລາວ.**

- ➢ ປັດຈຸບັນແມ່ນໄດ້ສຳເລັດການປະເມີນຊັບສິນຄົງທີ່ຂອງ ຜ-ຟຟລ ເບື້ອງຕົ້ນ ແລະ ຢູ່ໃນຂັ້ນຕອນການປະກອບຄຳຄິດເຫັນ ແລະ ປັບປຸງບົດລາຍງານສຸດທ້າຍຈາກທີ່ປຶກສາຜູ້ປະເມີນ, ເຊິ່ງຄາດວ່າຈະສຳເລັດ ພາຍໃນເດືອນ 09/2025 ແລະ ຮັບຮອງຜົນການປະເມີນພາຍໃນ ຜ-ຟຟລ ແລະ ພາກສ່ວນທີ່ກ່ຽວຂ້ອງພາຍໃນເດືອນ 10/2025.

4. **ສືບຕໍ່ດຳເນີນການສຶກສາ ຄວາມເປັນໄປໄດ້ໃນການນຳໃຊ້ສະກຸນເງິນຕາຕ່າງປະເທດ ໃນບົດລາຍງານການເງິນຂອງບໍລິສັດ. ຖ້າຫາກວ່າມີຄວາມເປັນໄປໄດ້ ແລະ ສົ່ງຜົນດີຕໍ່ ເອກະສານລາຍງານການເງິນ, ຜ-ຟຟລ ຈະສະເໜີຕໍ່ ກົມບັນຊີ, ກະຊວງການເງິນ ເພື່ອອະນຸມັດຕາມລະບຽບການ.**
- ➢ ປັດຈຸບັນແມ່ນຢູ່ໃນຂັ້ນຕອນການລວບລວມຂໍ້ມູນ ແລະ ດຳເນີນການສຶກສາຄວາມເປັນໄປໄດ້ຈາກທີ່ປຶກສາ EY Lao ເຊິ່ງຄາດວ່າຈະສຳເລັດການສຶກສາ ພາຍໃນເດືອນ ຕຸລາ 2025.

5. **ສືບຕໍ່ຕິດຕາມແຜນການຄວບຄຸມເງິນຕາຕ່າງປະເທດ ຈາກ ທະນາຄານແຫ່ງ ສປປ ລາວ (ທຫລ) ຢ່າງໃກ້ຊິດ ແລະ ສະເໜີໃຫ້ ລັດຖະບານ ແລະ ທຫລ ພິຈາລະນາຄຸ້ມຄອງອັດຕາແລກປ່ຽນ ໃຫ້ມີສະຖຽນລະພາບ ບໍ່ໃຫ້ສະກຸນເງິນກີບອ່ອນຄ່າເພີ່ມຕື່ມ ດ້ວຍຈັງຫວະທີ່ໄວ.**
- ➢ ຜ-ຟຟລ ແມ່ນໄດ້ສືບຕໍ່ຕິດຕາມການເຫນັງຕີງຂອງອັດຕາແລກປ່ຽນຮ່ວມກັບທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດຢ່າງໃກ້ຊິດ, ໂດຍສະເພາະໃນໄລຍະຊຳລະຄືນຮຸ້ນກູ້ ແລະ ດອກເບ້ຍຕ່າງໆ ເພື່ອຮັບປະກັນໃນການຮັກສາສະຖຽນລະພາບຂອງອັດຕາແລກປ່ຽນພາຍໃນປະເທດ.

❖ **<u>ແຜນການໄລຍະຍາວ ສາມາດປະຕິບັດໄດ້ດັ່ງນີ້</u>**:

1. **ສຶກສາ ແລະ ຄົ້ນຄວ້າ ໃນການຫລຸດສັດສ່ວນ ຫລື ຂາຍຮຸ້ນທີ່ຖືຄອງໃນໂຄງການ IPPs ທີ່ສຶກສາ ແລະ ຢັ້ງຢືນໄດ້ແລ້ວວ່າ ບໍ່ເສດຖະກິດ ຫຼື ໂຄງການທີ່ຍັງບໍ່ສາມາດສ້າງກະແສເງິນສົດໃຫ້ ຜ-ຟຟລ, ດ້ວຍການຕີມູນຄ່າຊັບສິນທີ່ ຍຸດຕິທຳ, ເໝາະສົມ ແລະ ຮັບປະກັນຜົນປະໂຫຍດສູງສຸດຂອງບໍລິສັດ. ຢ່າງໃດກໍຕາມ, ການພິຈາລະນາແລະດຳເນີນການຂາຍຊັບສິນ ຜ-ຟຟລ ຈະຕ້ອງຄຳນຶງເຖິງພັນທະສັນຍາກັບບັນດາເຈົ້າໜີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ ເພື່ອບໍ່ໃຫ້ເກີດການລະເມີດ ຫຼື ຜິດເງື່ອນໄຂສັນຍາ.**
- ➢ ໃນໄລຍະຜ່ານມາ ຜ-ຟຟລ ແມ່ນໄດ້ມີການຄົ້ນຄວ້າ ແລະ ພິຈາລະນາກ່ຽວກັບການຂາຍຊັບສິນບາງໂຄງການ ເຊັ່ນ: ການໂອນຮຸ້ນທີ່ ຜ-ຟຟລ ຖືຄອງໃນສັດສ່ວນ 15% ໃນໂຄງການເຂື່ອນໄຟຟ້ານ້ຳເທີນ 1 ແລະ 60% ທີ່ EDL-Gen O&M ຖືຄອງໃນ E&E ໃຫ້ແກ່ບໍລິສັດ ຈະເລີນເຊກອງ, ເພື່ອນຳມາຊຳລະເງິນຕົ້ນຮຸ້ນກູ້ ແລະ ດອກເບ້ຍຂອງ ຜ-ຟຟລ ທີ່ຄົບກຳນົດພາຍໃນປີ 2025 ແລະ ຕົ້ນປີ 2026. ສຳລັບການຄົ້ນຄວ້າໂຄງການ IPPs ທີ່ບໍ່ເສດຖະກິດແມ່ນຍັງຢູ່ໃນຂັ້ນຕອນການສຶກສາ ຄາດວ່າຈະມີຜົນການສຶກສາພາຍໃນເດືອນທັນວາ 2025.

2. **ສຶກສາຄວາມເປັນໄປໄດ້ໃນການເສີມສ້າງຄວາມສາມາດໃນການສ້າງລາຍຮັບ ເຊັ່ນ ຈາກການເຮັດ Carbon offset/credit, ການເຮັດລະບົບໂຊລ່າແບບລອຍ (Floating Solar System), ພັດທະນາ Pumping Hydro ເປັນຕົ້ນ...**
- ➢ ໃນໄລຍະຜ່ານມາ ຜ-ຟຟລ ແມ່ນໄດ້ມີການລົງນາມໃນ MOU ພັດທະນາໂຄງການໄຟຟ້າແບບສູບກັບ ທີ່ເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມ ແລະ ຫ້ວຍລຳພັນໃຫຍ່ ເພື່ອເພີ່ມປະສິດທິພາບການຜະລິດໄຟຟ້າໃຫ້ມີຄວາມຫມັ້ນຄົງຍິ່ງຂຶ້ນ. ລົງນາມໃນ MOA ໃນໂຄງການພະລັງງານແສງຕາເວັນ ຢູ່ເຂດໂຄງການເຂື່ອນໄຟຟ້າເຊລະບໍ, ເຂື່ອນໄຟຟ້າເຊເສັດ 1-2, ເຂື່ອນໄຟຟ້າເຊເສັດ 3 ແລະ ເຂື່ອນໄຟຟ້ານ້ຳມັງ 3, ໂດຍມີກຳລັງຕິດຕັ້ງລວມທັງຫມົດ 15MW, ເຊິ່ງຄາດວ່າຈະເຫັນຜົນການສຶກສາ ໃນທ້າຍປີ 2025.

3. **ດ້ານການລົງທຶນໃຫມ່ ບໍລິສັດຫ່ຈະມີການວິເຄາະ ແລະ ເລືອກເຟັ້ນ ເຊັ່ນ ລົງທຶນໃນໂຄງການນ້ອຍທີ່ມີຜົນກຳໄລສູງ ແລະ ໃຫ້ໂຄງການເປັນຜູ້ໄປກູ້ຍືມ ແລະ ໄປຊອກຫາແຫລ່ງທຶນ.**
- ➢ ຍັງຢູ່ໃນຂັ້ນຕອນການສຶກສາ ແລະ ພິຈາລະນາ

4. **ປັບປຸງ ແລະ ຍົກລະດັບວຽກງານການສ້ອມແປງບຳລຸງຮັກສາເຄື່ອງຈັກ ໂດຍທັນເປັນລະບົບທັນສະໄໝ ເພື່ອຊ່ວຍຫລຸດຜ່ອນຄ່າໃຊ້ຈ່າຍ ແລະ ສາມາດນຳໃຊ້ຕົ້ນທຶນໃຫ້ມີປະສິຕິພາບສູງສຸດ**

➢ ຍັງຢູ່ໃນຂັ້ນຕອນສຶກສາ ແລະ ພິຈາລະນາ

5. **ປັບປຸງນະໂຍບາຍການຈ່າຍເງິນປັນຜົນ ໂດຍອີງໃສ່ກະແສເງິນສົດຫລັງຫັກຄ່າສຳຮອງຕາມລະບຽບການ ຫລື ເງິນສຳຮອງອື່ນໆ (ຖ້າມີ) ອອກກ່ອນ ແລະ ບໍ່ຄຳນຶງພຽງແຕ່ກຳໄລສຸດທິພຽງຢ່າງດຽວ.**

➢ ຍັງຢູ່ໃນຂັ້ນຕອນສຶກສາ ແລະ ພິຈາລະນາ

ດັ່ງນັ້ນ, ຈຶ່ງຖືເປັນກຽດຮຽນສະເໜີລາຍງານມາຍັງທ່ານເພື່ອຊາບ ແລະ ເປັນຂໍ້ມູນ ຕາມສົມຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ,

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດາວວົງ ສຸບັນທະລາດ

ຮອງຜູ້ອຳນວຍການໃຫຍ່